ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ...002..../ປປທ

ນະຄອນຫຼວງວຽງຈັນ, ວັນທີ...02 ມິຖຸນາ 2025...

# ລັດຖະບັນຍັດ

## ວ່າດ້ວຍການປັບປຸງ ມາດຕາ 34 ແລະ ມາດຕາ 38 ຂອງກົດໝາຍວ່າດ້ວຍການປະກັນສັງຄົມ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 77/ສພຊ, ລົງວັນທີ 20 ເດືອນມີນາ ປີ 2025;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 162/ຄປຈ, ລົງວັນທີ 30 ພຶດສະພາ 2025;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 33/ຄປຈ, ລົງວັນທີ 30 ພຶດສະພາ 2025.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ:**

**ມາດຕາ 1 ຈຸດປະສົງ**

ລັດຖະບັນຍັດສະບັບນີ້ ກຳນົດເນື້ອໃນການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການປະກັນສັງຄົມ ສະບັບເລກທີ 54/ສພຊ, ລົງວັນທີ 27 ມິຖຸນາ 2018 ເພື່ອເຮັດໃຫ້ການປະຕິບັດວຽກງານຮີບດ່ວນຂອງການປັບປຸງກົງຈັກການຈັດຕັ້ງໃນທົ່ວປະເທດ ໃຫ້ທັນຕາມກຳນົດເວລາ ແນໃສ່ຮັບປະກັນການຈັດຕັ້ງປະຕິບັດວຽກງານປະກັນສັງຄົມ ມີຄວາມສອດຄ່ອງກັບ ແນວທາງ ນະໂຍບາຍ, ສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ແລະ ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ.

**ມາດຕາ 2 ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການປະກັນສັງຄົມ**

ການປັບປຸງເນື້ອໃນບາງມາດຕາຂອງກົດໝາຍວ່າດ້ວຍການປະກັນສັງຄົມ ມີດັ່ງນີ້:

**1 ມາດຕາ 34 ເງື່ອນໄຂຮັບການອຸດໜູນບຳນານ**

ຜູ້ທີ່ຮັບການອຸດໜູນບຳນານ ມີເງື່ອນໄຂ ດັ່ງນີ້:

1.1 ເພດຊາຍ ແລະ ເພດຍິງ ຕ້ອງມີປີການ ຊາວຫ້າປີ ຂຶ້ນໄປ ແລະ ມີອາຍຸກະສຽນ ຫ້າສິບເຈັດປີ ຫາ ຫົກສິບປີ ສຳລັບເພດຊາຍ, ຫ້າສິບຫ້າປີ ຫາ ຫົກສິບປີ ສຳລັບເພດຍິງ. ສຳລັບຜູ້ມີປີການ ຊາວສາມປີ ຂຶ້ນໄປ

ແຕ່ບໍ່ເຖິງ ຊາວຫ້າປີ ສາມາດຮັບອຸດໜູນບໍານານໄດ້ ແຕ່ໃຫ້ຫຼຸດອັດຕາສ່ວນຮ້ອຍອຸດໜູນບໍານານລົງໜຶ່ງ ສ່ວນຮ້ອຍ (1%) ຕໍ່ ໜຶ່ງປີການທີ່ຫຼຸດ;

ສໍາລັບອາຍຸກະສຽນ ແລະ ປີການຂອງທະຫານ, ຕໍາຫຼວດ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍວ່າດ້ວຍກໍາລັງປ້ອງກັນຄວາມສະຫງົບປະຊາຊົນ.

1.2 ເຂົ້າການປະຕິວັດກ່ອນປີ 1975, ເສຍກໍາລັງແຮງງານປະເພດ ໜຶ່ງ ຫາ ສີ່, ເຮັດວຽກກັບທາດເບື່ອ, ເຄມີ ແລະ ສານພິດທີ່ເປັນອັນຕະລາຍຕໍ່ສຸຂະພາບແຕ່ ຫ້າປີ ຂຶ້ນໄປ ຕາມການຢັ້ງຢືນທາງການແພດ, ມີອາຍຸກະສຽນ ຫ້າສິບຫ້າປີ ຂຶ້ນໄປ ສໍາລັບເພດຊາຍ, ຫ້າສິບປີຂຶ້ນໄປ ສໍາລັບເພດຍິງ ແລະ ມີປີການແຕ່ ຊາວປີ ຂຶ້ນໄປ ແລະ ໃຫ້ຈັດເຂົ້າຢູ່ໃນກຸ່ມຜູ້ຮັບບໍານານ ໄລຍະທີສາມ;

1.3 ເຮັດວຽກໃນລະບອບເກົ່າກ່ອນປີ 1975 ໃຫ້ຄິດໄລ່ປີການ ສາມປີໃດ ເທົ່າກັບ ໜຶ່ງປີການ ແລະ ໃຫ້ຈັດເຂົ້າເປັນ ໄລຍະທີສອງ;

1.4 ມີການຢັ້ງຢືນພັກຮັບບໍານານຢ່າງຖືກຕ້ອງ ຈາກຂະແໜງການທີ່ກ່ຽວຂ້ອງ.

**2 ມາດຕາ 38 ການຄິດໄລ່ເງິນອຸດໜູນເທື່ອດຽວ**

ຜູ້ບໍ່ຄົບເງື່ອນໄຂຮັບການອຸດໜູນບໍານານ ຈະໄດ້ຮັບເງິນອຸດໜູນເທື່ອດຽວ ຊຶ່ງຄິດໄລ່ເທົ່າກັບ ແປດສິບຫ້າສ່ວນຮ້ອຍ (85%) ຂອງເງິນປະກັນຕົນເດືອນສຸດທ້າຍ ຄູນ ໜຶ່ງເດືອນເຄິ່ງ ແລະ ຄູນ ໃຫ້ຈໍານວນປີການຂອງຜູ້ກ່ຽວ.

**ມາດຕາ 3 ການປ່ຽນແທນເນື້ອໃນບາງມາດຕາຂອງກົດໝາຍ**

ລັດຖະບັນຍັດສະບັບນີ້ ປ່ຽນແທນເນື້ອໃນມາດຕາ 34 ແລະ ມາດຕາ 38 ຂອງກົດໝາຍວ່າດ້ວຍການປະກັນສັງຄົມ ສະບັບເລກທີ 54/ສພຊ, ລົງວັນທີ 27 ມິຖຸນາ 2018.

**ມາດຕາ 4 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້.

**ມາດຕາ 5 ຜົນສັກສິດ**

ລັດຖະບັນຍັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

**ທອງລຸນ ສີສຸລິດ**